ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເລກທີ: 07 /ສພບ

ນະຄອນຫຼວງວຽງຈັນ, ວັນທີ: 26/04/2019

ມະຕິ
ກອງປະຊຸມສາມັນຜູ້ຖືຮຸ້ນ ທຄຕລ ປະຈຳປີ 2018.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ໄດ້ຈັດກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2018 (ຕໍ່ໄປນີ້ຮຽກວ່າ: "ກອງປະຊຸມ") ຂຶ້ນໃນເວລາ 14:30 ໂມງ ຫາ 16:00 ໂມງ ຂອງວັນທີ 26 ເມສາ 2019 ທີ່ຫ້ອງປະຊຸມ Grand Ballroom ໂຮງແຮມແລນມາກແມ່ຂອງຣີເວີໄຊ, ນະຄອນຫຼວງວຽງຈັນ, ໂດຍການເປັນປະທານຂອງ ທ່ານ ປອ. ບຸນເຫຼືອ ສິນໄຊວໍຣະວົງ, ຫົວໜ້າກົມນະໂຍບາຍການເງິນ ແລະ ນິຕິກຳ, ກະຊວງການເງິນ, ປະທານສະພາບໍລິຫານ ທຄຕລ ພ້ອມດ້ວຍສະມາຊິກສະພາບໍລິຫານ ທຄຕລ, ມີຜູ້ຖືຮຸ້ນເຂົ້າຮ່ວມດ້ວຍຕົນເອງຈຳນວນ 87 ທ່ານ, ຜູ້ມອບສິດຈຳນວນ 193 ທ່ານ ຊຶ່ງລວມຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມກອງປະຊຸມເທົ່າກັບ 179.490.932 ຮຸ້ນ, ນັບທັງ 1.060.332 ຮຸ້ນ ທີ່ຖືກມອບສິດ, ບັນລຸອັດຕາສ່ວນ 86,409 % ຂອງຈຳນວນຮຸ້ນ ທຄຕລ ທັງໝົດ ແລະ ຖືວ່າຄົບອົງປະຊຸມ ເພື່ອໃຫ້ສາມາດດຳເນີນກອງປະຊຸມໄດ້ຕາມກົດລະບຽບຂອງ ທຄຕລ ແລະ ກົດໝາຍທີ່ກ່ຽວຂ້ອງ. ສຳລັບຮຸ້ນທີ່ບໍ່ໄດ້ເຂົ້າຮ່ວມກອງປະຊຸມ ມີຈຳນວນ 28.232.368 ຮຸ້ນ ເທົ່າກັບ 13,591 % ຂອງຈຳນວນຮຸ້ນ ທຄຕລ ທັງໝົດ.

ກອງປະຊຸມ ໄດ້ພິຈາລະນາ ແລະ ມີມະຕິດັ່ງນີ້:

ວາລະທີ 1: ຮັບຊາບການລາຍງານ ກ່ຽວກັບ ການຈັດຕັ້ງປະຕິບັດມະຕິຂອງກອງປະຊຸມຜູ້ຖືຮຸ້ນຄັ້ງຜ່ານມາ.

ວາລະທີ 2: ຮັບຊາບການລາຍງານການເຄື່ອນໄຫວດຳເນີນງານຂອງ ທຄຕລ ປະຈຳປີ 2018 ໂດຍຫຍໍ້.

ວາລະທີ 3: ຮັບຮອງເອົາຜົນການດຳເນີນທຸລະກິດປະຈຳປີ 2018:

ຜົນການດຳເນີນທຸລະກິດປະຈຳປີ 2018 ມາດຖານສາກົນສະເພາະກິດຈະການ ທີ່ໄດ້ຮັບການກວດສອບຈາກບໍລິສັດເອິນແອນຢັ້ງລາວຈຳກັດ ມີດັ່ງນີ້:

- ຍອດຊັບສິນ/ໜີ້ສິນ: 38.942.645 ລ້ານກີບ;
- ຍອດສິນເຊື່ອທັງໝົດ: 24.338.369 ລ້ານກີບ;
- ຍອດເງິນຝາກທັງໝົດ: 32.968.912 ລ້ານກີບ;
- ກຳໄລກ່ອນອາກອນ: 459.256 ລ້ານກີບ;
- ກຳໄລຫຼັງອາກອນ: 353.656 ລ້ານກີບ,

ກອງປະຊຸມມອບສິດໃຫ້ສະພາບໍລິຫານ ທຄຕລ ພິຈາລະນາຮັບຮອງຜົນການດຳເນີນທຸລະກິດປະຈຳປີ 2018 ມາດຖານສາກົນແບບສັງລວມກິດຈະການ ຫຼັງສຳເລັດການກວດສອບ.

ກອງປະຊຸມ ໄດ້ມີມະຕິດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: **179.490.932** ສຽງ, ເທົ່າກັບ **100** % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 4: ຮັບຮອງເງິນປັນຜົນປະຈຳປີ 2018:

ຫຼັງຈາກຫັກລາຍຈ່າຍອາກອນ ແລະ ສ້າງຄັງຕ່າງໆຕາມລະບຽບການແລ້ວ, ເຫັນດີຈ່າຍເງິນປັນຜົນຈຳນວນທັງໝົດ: **205.853 ລ້ານກີບ**ໃຫ້ຜູ້ຖືຮຸ້ນ ທຄຕລ ທີ່ມີລາຍຊື່ໃນປຶ້ມບັນຊີຜູ້ຖືຮຸ້ນ ໃນມື້ປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຜູ້ຖືຮຸ້ນໃນການຮັບເງິນປັນຜົນ ແລະ ເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ໃນວັນທີ 01 ເມສາ 2019, ໃນອັດຕາ **991 ກີບ/ຮຸ້ນ**. ການຈ່າຍເງິນປັນຜົນໃຫ້ສຳເລັດພາຍໃນ 10 ວັນລັດຖະການຫຼັງຈາກກອງປະຊຸມຄັ້ງນີ້.

ກອງປະຊຸມ ໄດ້ມີມະຕິດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: **179.490.932** ສຽງ, ເທົ່າກັບ **100** % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 5: ຮັບຮອງເອົາແຜນການປີ 2019:

- ຍອດຊັບສິນ: 42.742.300 ລ້ານກີບ
- ຍອດເງິນຝາກ: 35.730.000 ລ້ານກີບ
- ຍອດເງິນກູ້: 25.830.000 ລ້ານກີບ
- ກຳໄລກ່ອນອາກອນ: 565.000 ລ້ານກີບ
- ແຜນຮັບພະນັກງານໃໝ່ ປະກອບໃຫ້ ທຄຕລ ທົ່ວລະບົບ ຈຳນວນ 200 ຄົນ,
- ແຜນການຂະຫຍາຍຕາໜ່າງບໍລິການເພີ້ມຂຶ້ນ 10 ໜ່ວຍບໍລິການ ໃນທົ່ວປະເທດ
- ແຜນການນຳໃຊ້ທຶນເພື່ອປະກອບວັດຖຸເຕັກນິກ, ກໍ່ສ້າງ ແລະ ສ້ອມແປງ ທີ່ຄາດວ່າຈະໂອນເປັນຊັບສິນບັດຄົງທີ່ ເປັນຈຳນວນເງິນທັງໝົດ: 172.153 ລ້ານກີບ.

ກອງປະຊຸມ ໄດ້ມີມະຕິດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: **179.490.932** ສຽງ, ເທົ່າກັບ **100** % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 6: ຮັບຮອງເອົາຜູ້ກວດສອບອິດສະຫຼະ ປະຈຳປີ 2019:

ຮັບຮອງເອົາບໍລິສັດເອິນແອນຢັ່ງລາວ ຈຳກັດ ເປັນຜູ້ກວດສອບຖານະການເງິນ ທຄຕລ ປະຈຳປີ 2019, ລາຄາກວດສອບ 93.000 ໂດລາ (ເກົ້າສິບສາມພັນໂດລາສະຫະລັດຖ້ວນ) ພາຍໃຕ້ເງື່ອນໄຂທີ່ບໍລິສັດເອິນແອນຢັ່ງລາວ ຈຳກັດ ຕ້ອງປ່ຽນຜູ້ຮຸ້ນສ່ວນຮັບຜິດຊອບ (Partner) ໃນການລົງລາຍເຊັນໃນບົດລາຍງານການເງິນ ແລະ ຜູ້ຮຸ້ນສ່ວນ

ຮັບຜິດຊອບ (Partner) ໃໝ່ ຂອງບໍລິສັດເອັນແອນຢັ້ງລາວ ຈຳກັດ ສາມາດດຳເນີນການກວດສອບບັນຊີໃຫ້ ທຄຕລ ໄດ້ສູງສຸດບໍ່ເກີນ 5 ປີ (ຮອດປີ 2020).

ກອງປະຊຸມ ໄດ້ມີມະຕິດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: **179.490.932** ສຽງ, ເທົ່າກັບ **100** % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 7: ຮັບຮອງການລົງທຶນຂອງ ທຄຕລ ໃນການຮ່ວມສ້າງຕັ້ງບໍລິສັດ ລາວເນເຊິນນໍ ເພເມັ້ນ ເນັດເວີກ ຈຳກັດ (Lao National Payment Network Co., LTD)

ຮັບຮອງໃຫ້ ທຄຕລ ຮ່ວມລົງທຶນສ້າງຕັ້ງບໍລິສັດ ລາວ ເນເຊິນນໍ ເພເມັ້ນ ເນັດເວີກ ຈຳກັດ ຊຶ່ງເປັນບໍລິສັດທີ່ໃຫ້ບໍລິການດ້ານລະບົບຊຳລະສາງແບບທັນສະໄໝໃຫ້ແກ່ບັນດາທະນາຄານພາຍໃນປະເທດ ໂດຍມີບັນດາທະນາຄານທຸລະກິດພາຍໃນປະເທດຈຳນວນ 7 ແຫ່ງ ແລະ ບໍລິສັດຈາກຕ່າງປະເທດ 1 ແຫ່ງ ຮ່ວມລົງທຶນສ້າງຕັ້ງ. ຊຶ່ງ ມີທຶນຈົດທະບຽນທັງໝົດ 34.000 ລ້ານກີບ. ໃນນັ້ນ, ທຄຕລ ໄດ້ຮ່ວມລົງທຶນ 20% ຂອງຮຸ້ນທັງໝົດ ເປັນມູນຄ່າ 6.800 ລ້ານກີບ ແລະ ໄດ້ຮັບສິດໃນການແຕ່ງຕັ້ງ ຜູ້ອຳນວຍການບໍລິສັດ.

ກອງປະຊຸມ ໄດ້ມີມະຕິດ້ວຍຄະແນນສຽງຫຼາຍກວ່າສອງສ່ວນສາມຂອງຈຳນວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ແລະ ຖືຮຸ້ນລວມກັນຫຼາຍກວ່າ 80% ຂອງຮຸ້ນ ທຄຕລ ທັງໝົດ ດັ່ງນີ້:

- ເຫັນດີຈຳນວນ: **87 ຄົນ, ເທົ່າກັບ 100%** ຂອງຈຳນວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ແລະ ຖືຮຸ້ນລວມກັນ ຈຳນວນ **179.490.932 ຮຸ້ນ, ເທົ່າກັບ 86,409 %** ຂອງຈຳນວນຮຸ້ນທັງໝົດ.
- ບໍ່ເຫັນດີຈຳນວນ: 0 ຄົນ, ເທົ່າກັບ 0 % ຂອງຈຳນວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ແລະ ຖືຮຸ້ນລວມກັນ ຈຳນວນ 0 ຮຸ້ນ, ເທົ່າກັບ 0 % ຂອງຈຳນວນຮຸ້ນທັງໝົດ.

ມະຕິກອງປະຊຸມສະບັບນີ້ ຖືເປັນບ່ອນອີງສຳຄັນ ສຳລັບທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເພື່ອແຈ້ງໃຫ້ຜູ້ຖືຮຸ້ນ, ນັກລົງທຶນ, ພາກສ່ວນທີ່ກ່ຽວຂ້ອງຮັບຊາບ ແລະ ນຳໄປຈັດຕັ້ງປະຕິບັດ.

ປະທານກອງປະຊຸມ

ປອ. ບຸນເຫຼືອ ສິນໄຊວໍຣະວົງ